ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 2721 /ສສກ
ນະຄອນຫຼວງວຽງຈັນ, ວັນທີ 26 ພຶດສະພາ 2025

# ຂໍ້ຕົກລົງ
# ວ່າດ້ວຍການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາຊັ້ນສູງ ສະບັບເລກທີ 87/ສພຊ, ລົງວັນທີ 11 ພະຈິກ 2020;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງກົມການສຶກສາຊັ້ນສູງ ສະບັບເລກທີ 531/ຊສ, ລົງວັນທີ 16 ພຶດສະພາ 2025.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງ ເພື່ອເປັນບ່ອນອີງໃຫ້ແກ່ ການຈັດຕັ້ງປະຕິບັດການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ສົ່ງເສີມ ຖານະບົດບາດ, ກຽດສັກສີ, ການຮັບຮູ້ຊື່ວຸດທິການສຶກສາ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

### ມາດຕາ 2 ການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງ

ການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງ ແມ່ນການນຳໃຊ້ຊື່ວຸດທິການສຶກສາໃຫ້ສອດຄ່ອງ ແລະ ມີຄວາມເປັນເອກະພາບ, ເປັນການກຳນົດອັກສອນຫຍໍ້ຊື່ວຸດທິການສຶກສາຊັ້ນສູງ ຊຶ່ງປະກອບມີ ອະນຸປະລິນຍາ, ປະລິນຍາຕີ, ປະລິນຍາໂທ, ປະລິນຍາເອກ, ລົງເລິກຂະແໜງການ, ຊ່ຽວຊານຂັ້ນໜຶ່ງ ແລະ ຊ່ຽວຊານຂັ້ນສອງ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ວຸດທິການສຶກສາຊັ້ນສູງ** ໝາຍເຖິງ ຜົນສຳເລັດການສຶກສາຊັ້ນສູງໃດໜຶ່ງ ທີ່ມີການຢັ້ງຢືນຢູ່ໃນປະກາສະນີຍະບັດ ຕາມໂຄງການຫຼັກສູດກຳນົດໄວ້;

2. **ອັກສອນຫຍໍ້ຊື່ວຸດທິການສຶກສາຊັ້ນສູງ** ໝາຍເຖິງ ການກຳນົດຈາກຄຳສັບສະເພາະທາງວິຊາການ ເພື່ອຫຍໍ້ເຂົ້າໃຫ້ມີລັກສະນະສັ້ນກະທັດຮັດ ແຕ່ຍັງຄົງຄວາມໝາຍຖືກຕ້ອງ ແລະ ສອດຄ່ອງກັບຄຳສັບເດີມ;

3. **ຕຳແໜ່ງວິຊາການຄູ** ໝາຍເຖິງ ຕຳແໜ່ງວິຊາການທາງດ້ານການສິດສອນ, ຄົ້ນຄວ້າວິທະຍາສາດ ແລະ ຜົນງານວິຊາການອື່ນໆທີ່ກ່ຽວຂ້ອງ ຊຶ່ງປະກອບມີຂັ້ນສາດສະດາຈານ, ຮອງສາດສະດາຈານ, ອາຈານ ແລະ ຜູ້ຊ່ວຍອາຈານ ຕາມລະບຽບການກຳນົດໄວ້;

4. **ເອກະສານທາງການ** ໝາຍເຖິງ ເອກະສານທີ່ໃຊ້ຢ່າງເປັນທາງການຢູ່ໃນອົງການຈັດຕັ້ງຂອງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ສັງຄົມ, ບຸກຄົນ, ນິຕິບຸກຄົນ ມີຜົນບັງຄັບໃຊ້ໃນທາງກົດໝາຍ ແລະ ລະບຽບການ;

5. **ເອກະສານສ່ວນບຸກຄົນ** ໝາຍເຖິງ ເອກະສານທີ່ສ້າງຂຶ້ນ ລະຫວ່າງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຄອບຄົວ ແລະ ວົງຕະກຸນ ເພື່ອນຳໃຊ້ເຂົ້າໃນກິດຈະກາປະຈຳວັນ, ຕິດຕໍ່ພົວພັນ ແລະ ເຄື່ອນໄຫວວຽກງານສ່ວນຕົວ ແລະ ສັງຄົມ ລວມທັງການເຄື່ອນໄຫວວຽກງານການຄົ້ນຄວ້າວິທະຍາສາດ.

**ມາດຕາ 4 ຫຼັກການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງ**

ການເຄື່ອນໄຫວວຽກງານການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ ແລະ ກົດໝາຍ ພ້ອມທັງສອດຄ່ອງກັບພາກພື້ນ ແລະ ສາກົນ;
2. ຮັບປະກັນການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຮັບປະກັນໃຫ້ມີຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນ ແລະ ເຄື່ອນໄຫວວຽກງານທາງດ້ານວິຊາການທີ່ກ່ຽວຂ້ອງກັບການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ຊື່ວຸດທິການສຶກສາຊັ້ນສູງ

**ມາດຕາ 6 ຊື່ວຸດທິການສຶກສາຊັ້ນສູງ**

ຊື່ວຸດທິການສຶກສາຊັ້ນສູງ ແມ່ນການກຳນົດຊື່ວຸດທິການສຶກສາໃນເອກະສານທາງການ ແລະ ເອກະສານສ່ວນບຸກຄົນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາຊັ້ນສູງ, ມາດຕະຖານຫຼັກສູດແຫ່ງຊາດ ແລະ ລະບຽບການທີ່ກ່ຽວຂ້ອງ.

ຊື່ວຸດທິການສຶກສາຊັ້ນສູງໃນປະກາສະນີຍະບັດ ມີດັ່ງນີ້:

1. ອະນຸປະລິນຍາ;
2. ປະລິນຍາຕີ;
3. ປະລິນຍາໂທ;
4. ປະລິນຍາເອກ;
5. ລົງເລິກຂະແໜງວິຊາ;
6. ຊ່ຽວຊານຂັ້ນໜຶ່ງ;
7. ຊ່ຽວຊານຂັ້ນສອງ.

**ມາດຕາ 7 ອະນຸປະລິນຍາ**

ອະນຸປະລິນຍາ ແມ່ນການສຶກສາວິຊາການໃນລະດັບຕົ້ນຂອງການສຶກສາຊັ້ນສູງໃນສາຂາວິຊາສະເພາະໃດໜຶ່ງທາງດ້ານວິທະຍາສາດ ແລະ ສັງຄົມ. ຊຶ່ງຂຽນຫຍໍ້ວ່າ: ອປ. ແລະ ພາສາອັງກິດ: Associate Degree ຂຽນຕົວຫຍໍ້: A.

ການກຳນົດອັກສອນຫຍໍ້ສາຂາວິຊາຮຽນ ແມ່ນຂຶ້ນກັບ ຫຼັກສູດການຮຽນການສອນ ຂອງສະຖານການສຶກສາຊັ້ນສູງກຳນົດໄວ້ສະເພາະ.

**ມາດຕາ 8 ປະລິນຍາຕີ**

ປະລິນຍາຕີ ແມ່ນການສຶກສາວິຊາການລະດັບເໜືອກວ່າອະນຸປະລິນຍາໃນສາຂາວິຊາສະເພາະໃດໜຶ່ງທາງດ້ານວິທະຍາສາດ ແລະ ສັງຄົມ. ຂຽນຫຍໍ້ວ່າ: ປຕ. ແລະ ພາສາອັງກິດ: Bachelor Degree ຂຽນຕົວຫຍໍ້: B.

ການກຳນົດອັກສອນຫຍໍ້ສາຂາວິຊາຮຽນ ແມ່ນຂຶ້ນກັບ ຫຼັກສູດການຮຽນການສອນ ຂອງສະຖານການສຶກສາຊັ້ນສູງກຳນົດໄວ້ສະເພາະ.

**ມາດຕາ 9 ປະລິນຍາໂທ**

ປະລິນຍາໂທ ແມ່ນການສຶກສາວິຊາການລະດັບເໜືອກວ່າປະລິນຍາຕີໃນສາຂາວິຊາສະເພາະໃດໜຶ່ງທີ່ລົງເລິກໃນສາຂາວິຊາສະເພາະ, ເປັນການຄົ້ນຄວ້າວິທະຍາສາດ ເພື່ອຕໍ່ຍອດ ແລະ ເສີມຂະຫຍາຍຄວາມຮູ້ທີ່ມີ. ຂຽນຫຍໍ້ວ່າ: ປທ. ແລະ ພາສາອັງກິດ: Master Degree ຂຽນຕົວຫຍໍ້: M.

ການກຳນົດອັກສອນຫຍໍ້ສາຂາວິຊາຮຽນ ແມ່ນຂຶ້ນກັບ ຫຼັກສູດການຮຽນການສອນ ຂອງສະຖານການສຶກສາຊັ້ນສູງກຳນົດໄວ້ສະເພາະ.

**ມາດຕາ 10 ປະລິນຍາເອກ**

ປະລິນຍາເອກ ແມ່ນການສຶກສາວິຊາການລະດັບສູງສຸດ ທີ່ລົງເລິກທາງດ້ານການຄົ້ນຄວ້າວິທະຍາສາດໃນສາຂາວິຊາສະເພາະໃດໜຶ່ງ ຕໍ່ຈາກລະດັບປະລິນຍາໂທ, ເປັນການພັດທະນາທາງດ້ານນະວັດຕະກຳ ແລະ ການຄົ້ນພົບສິ່ງໃໝ່ໆທາງດ້ານວິທະຍາສາດ ແລະ ສັງຄົມ. ຂຽນຫຍໍ້ວ່າ: ປອ. ແລະ ພາສາອັງກິດ: Doctoral Degree ຕົວຫຍໍ້: Dr. ຫຼື PhD.

**ມາດຕາ 11 ລົງເລິກຂະແໜງວິຊາ**

ລົງເລິກຂະແໜງວິຊາ ແມ່ນການສຶກສາວິຊາສະເພາະຂະແໜງການໃດໜຶ່ງ ໃນລະດັບທຽບເທົ່າປະລິນຍາຕີ, ຊຶ່ງມີຄວາມຮູ້ທາງດ້ານທິດສະດີ, ດ້ານເຕັກນິກທີ່ກວ້າງຂວາງ, ລົງເລິກສະເພາະສາຂາວິຊາໃດໜຶ່ງ ຄື: ລົງເລິກຂະແໜງວິຊາ ຂຽນຫຍໍ້ວ່າ: ລຂ. ພາສາອັງກິດ: Graduate Diploma ຕົວຫຍໍ້: GD.

**ມາດຕາ 12 ຊ່ຽວຊານຂັ້ນໜຶ່ງ**

ຊ່ຽວຊານຂັ້ນໜຶ່ງ ແມ່ນການສຶກສາວິຊາສະເພາະຂະແໜງການໃດໜຶ່ງ ໃນລະດັບທຽບເທົ່າ ປະລິນຍາໂທ, ຊຶ່ງມີຄວາມຮູ້ຢ່າງເລິກເຊິ່ງ, ເປັນການຄົ້ນຄວ້າວິທະສາດເພື່ອຕໍ່ຍອດ ແລະ ເສີມຂະຫຍາຍຄວາມຮູ້ທີ່ມີ ຄື: ຊ່ຽວຊານຂັ້ນໜຶ່ງ ຂຽນຫຍໍ້ວ່າ: ຊຊ I. ພາສາອັງກິດ: First Degree Diploma of Specialization ຕົວຫຍໍ້: FSD.

**ມາດຕາ 13 ຊ່ຽວຊານຂັ້ນສອງ**

ຊ່ຽວຊານຂັ້ນສອງ ແມ່ນການສຶກສາວິຊາສະເພາະລະດັບສູງສຸດໃນສາຂາວິຊາໃດໜຶ່ງ ໃນລະດັບທຽບເທົ່າປະລິນຍາເອກ ມີຄວາມຮູ້ ແລະ ຊ່ຽວຊານໃນລະດັບເລິກເຊິ່ງ, ການຄົ້ນຄວ້າວິທະຍາສາດໃນສາຂາວິຊາສະເພາະໃດໜຶ່ງ ຕໍ່ຈາກລະດັບຊ່ຽວຊານຂັ້ນໜຶ່ງ ໃນການຄົ້ນຄິດປະດິດສ້າງສິ່ງໃໝ່ໆ ແລະ ນະວັດຕະກໍາ ຄື: ຊ່ຽວຊານຂັ້ນສອງ ຂຽນຫຍໍ້ວ່າ: ຊຊ II. ພາສາອັງກິດ: Second Degree Diploma of Specialization ຕົວຫຍໍ້: SSD.

## ໝວດທີ 3
## ການນໍາໃຊ້ອັກສອນຫຍໍ້ຊື່ວຸດທິການສຶກສາຊັ້ນສູງ

**ມາດຕາ 14 ການນໍາໃຊ້ອັກສອນຫຍໍ້ຊື່ວຸດທິການສຶກສາຊັ້ນສູງນໍາໜ້າຊື່ໃນເອກະສານ**

ການນໍາໃຊ້ອັກສອນຫຍໍ້ຊື່ວຸດທິການສຶກສາຊັ້ນສູງນໍາໜ້າຊື່ໃນເອກະສານທາງການໃຫ້ກໍານົດເອົາສະເພາະລະດັບປະລິນຍາເອກ ຂຽນຫຍໍ້ວ່າ: ປອ. ແລະ ພາສາອັງກິດໃຫ້ຂຽນຫຍໍ້ວ່າ: Dr. ຫຼື PhD, ຊຶ່ງສາມາດນໍາໃຊ້ອັນໃດໜຶ່ງເທົ່ານັ້ນ ຖ້ານໍາໃຊ້ Dr. ແມ່ນໃຫ້ວາງນໍາໜ້າຊື່, ແຕ່ຖ້າຈະໃຊ້ PhD ແມ່ນໃຫ້ໄວ້ວາງຫຼັງຊື່.

ລະດັບອະນຸປະລິນຍາ ເຖິງ ປະລິນຍາໂທ ແລະ ລະດັບອື່ນໆ ທີ່ທຽບເທົ່າໃຫ້ນໍາໃຊ້ໄດ້ໃນເອກະສານສ່ວນບຸກຄົນເທົ່ານັ້ນ.

**ມາດຕາ 15 ການນໍາໃຊ້ອັກສອນຫຍໍ້ຊື່ວຸດທິການສຶກສາຊັ້ນສູງທີ່ຕິດພັນກັບຕໍາແໜ່ງວິຊາການຄູ**

ການນໍາໃຊ້ອັກສອນຫຍໍ້ຊື່ວຸດທິການສຶກສາຊັ້ນສູງນໍາໜ້າຊື່ ໃນເອກະສານທາງການ ແມ່ນໃຫ້ຈັດລຽງລໍາດັບໂດຍເລີ່ມຈາກ ຕໍາແໜ່ງວິຊາການຄູ, ວຸດທິການສຶກສາ ແລະ ເພດ (ສະເພາະເພດຍິງ) ຕາມລໍາດັບ ເຊັ່ນ: ສຈ. ປອ., ສຈ. ປອ. ນ., ຮສ. ປອ., ອຈ. ປອ., ແລະ ອຈ. ປອ.

ສໍາລັບການເອີ້ນຊື່ອັກສອນຫຍໍ້ດັ່ງກ່າວ ແມ່ນໃຫ້ເອີ້ນຊື່ເຕັມ ຕາມຕໍາແໜ່ງທີ່ໄດ້ຮັບການແຕ່ງຕັ້ງເພື່ອເປັນການໃຫ້ກຽດແກ່ຜູ້ກ່ຽວໃນສັງຄົມ ແລະ ສາຍວິຊາການ ເປັນຕົ້ນ ສາດສະດາຈານ ປະລິນຍາເອກ, ຮອງສາດສະດາຈານ ປະລິນຍາເອກ ນາງ...

ສໍາລັບການນໍາໃຊ້ ອັກສອນຫຍໍ້ຊື່ວຸດທິການສຶກສາຊັ້ນສູງ ນໍາໜ້າຊື່ຂອງແຕ່ລະຂະແໜງການແມ່ນໃຫ້ຂະແໜງການທີ່ກ່ຽວຂ້ອງເປັນຜູ້ສ້າງລະບຽບການສະເພາະຂອງຕົນ ໂດຍໃຫ້ສອດຄ່ອງຕາມຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 16 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ປອມແປງເອກະສານທາງລັດຖະການ, ບິດເບືອນຂໍ້ມູນ ຫຼື ແອບອ້າງການນໍາໃຊ້ຊື່ວຸດທິການສຶກສາຊັ້ນສູງນໍາໜ້າຊື່ ໂດຍທີ່ບໍ່ຖືກຕ້ອງ;
2. ນໍາໃຊ້ຊື່ວຸດທິການສຶກສາຕໍ່າກວ່າລະດັບປະລິນຍາເອກໃນເອກະສານທາງການ;
3. ໃຫ້, ຮັບສິນບົນ ຫຼື ຜົນປະໂຫຍດອື່ນ ກັບບຸກຄົນທີ່ກ່ຽວຂ້ອງ;

4. ກົດໜ່ວງຖ່ວງດຶງ ເອກະສານກ່ຽວກັບການນໍາໃຊ້ວຸດທິການສຶກສາຊັ້ນສູງ;

5. ມີພຶດຕິກໍາອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 17 ຂໍ້ຫ້າມສໍາລັບພະນັກງານ-ລັດຖະກອນ ແລະ ຂະແໜງການທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ແລະ ຂະແໜງການທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ຫຼື ອໍານາດ ເພື່ອຜົນປະໂຫຍດສ່ວນຕົວ;
2. ກົດໜ່ວງຖ່ວງດຶງ ຫຼື ປອມແປງເອກະສານ ຫຼື ຂໍ້ມູນກ່ຽວກັບການນໍາໃຊ້ຊື່ວຸດທິການສຶກສາຊັ້ນສູງ;
3. ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ ທີ່ໄດ້ຮັບມອບໝາຍ;
4. ໃຫ້, ຮັບ, ທວງເອົາ, ຂໍເອົາສິນບົນເພື່ອຜົນປະໂຫຍດຂອງຕົນເອງ;
5. ມີພຶດຕິກໍາອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ກະຊວງ, ອົງການທຽບເທົ່າກະຊວງ, ຫ້ອງການ, ກົມ, ສະຖາບັນ, ສູນ, ສະຖານການສຶກສາຊັ້ນສູງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 19 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບອັນລົງລາຍເຊັນ ເປັນຕົ້ນໄປ.

ເຈົ້າແທນ ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ ★ ລັດຖະມົນຕີ ★

ປອ. ສໍາລານ ພັນຄະວົງ